## ຂ້າພະເຈົ້າຈະຕິດຕໍ່ໃຜໄດ້ແດ່ຖ້າວ່າຂ້າພະເຈົ້າມີຄວາມກັງວົນກ່ຽວກັບຄະດີຂອງຂ້າພະເຈົ້າທີ່ບໍ່ສາມາດແກ້ໄຂໄດ້ກັບພະນັກງານດູແລຄະດີ FVS?

ຖ້າວ່າທ່ານມີຄຳຮ້ອງທຸກ ຫຼື ມີຄວາມກັງວົນກ່ຽວກັບເລື່ອງຂອງທ່ານກຳລັງຖືກຈັດການແນວໃດ, ໃຫ້ໂທຫາຫົວໜ້າສາຍງານຜູ້ຮັບຜິດຊອບເລື່ອງ FVS ຂອງທ່ານ. ຖ້າວ່າຄວາມກັງວົນຂອງທ່ານຍັງບໍ່ໄດ້ຮັບການແກ້ໄຂ ທ່ານສາມາດໂທຫາຜູ້ບໍລິຫານງານເຂດໄດ້.

ທ່ານອາດຈະໂທຫາ Office of Constituent Relations (ຫ້ອງການປະຊາສຳພັນເພີ່ມເຕີມ) ໄດ້ທີ່ເບີ 800-723-4831 ຫຼື 360-902-8060 ເພື່ອ ຂໍຄວາມຊ່ວຍເຫຼືອໄດ້ທຸກເວລາ.

ຄອບຄົວໃນ ລັດ Washington ແລະ ສຳນັກງານຜູ້ກວດແຜນດິນເດັກຮັບຄວາມກັງວົນ ແລະ ການຮ້ອງຮຽນກ່ຽວກັບກິດຈະກຳຂອງ Department of Children, Youth and Families (ກົມກິດຈະການເດັກນ້ອຍ, ແລະ ຊາວໜຸ່ມ, ແລະ ຄອບຄົວ) ແລະ ພວກເຂົາມີອຳນາດທີ່ຈະສືບສວນຄວາມກັງວົນໄດ້. ທ່ານສາມາດຕິດຕໍ່ພວກເຂົາໄດ້ທີ່ 800-571-7321.

## ສຳລັບຂໍ້ມູນເພີ່ມເຕີມເຂົ້າຊົມໄດ້ທີ່:

https://dcyf.wa.gov/services/child-welfare-system/cps



**ຂໍ້ມູນຂອງພະນັກງານດູແລກໍລະນີ:**

ຊື່: ______________________________

ໂທລະສັບ: ______________________________

ອີເມລ: ______________________________

**ຂໍ້ມູນຂອງພະນັກງານດູແລກໍລະນີ:**

ຊື່: ______________________________

ໂທລະສັບ: ______________________________

ອີເມລ: ______________________________

**ຄົ້ນຫາສຳນັກງານ DCYF ໃນພື້ນທີ່ຂອງທ່ານ:**

ສະແກນລະຫັດ QR, ຫຼື ໄປທີ່:
**https://apps-ca-ext.dcyf.wa.gov/CAOfficesPub/offices/general/OfficePick.asp**

*ຖ້າວ່າທ່ານຕ້ອງການອັດສຳເນົາ ຟຣີຂອງສິ່ງພິມນີ້ໃນຮູບແບບທາງເລືອກ ຫຼື ພາສາ, ກະລຸນາຕິດຕໍ່ຫາປະຊາສຳພັນລະຫວ່າງອົງກອນຂອງDCYF ໄດ້ທີ່ 1-800-723-4831 ຫຼື ອີເມລ***communications@dcyf.wa.gov**.

DCYF PUBLICATION CWP_0035 | DSHS 22-1751 LA (03-2025) Laotian

# Family Voluntary Services (ການບໍລິການຄອບຄົວອາສາສະໝັກ)

*ການເສີມສ້າງຄວາມເຂັ້ມແຂງໃຫ້ກັບຄອບຄົວຜ່ານການເຊື່ອມຕໍ່ກັບການບໍລິການສະໜັບສະໜູນ ແລະ ຊັບພະຍາກອນ*



Washington State Department of
CHILDREN, YOUTH & FAMILIES

## Family Voluntary Services (ການບໍລິການຄອບຄົວອາສາສະໝັກ, FVS) ແມ່ນຫຍັງ?

FVS ແມ່ນໂຄງການທີ່ເຮັດໃຫ້ ພໍ່ແມ່/ຜູ້ປົກຄອງຕາມກົດໝາຍເລືອກທີ່ຈະເຂົ້າຮ່ວມບໍລິການເພື່ອຕອບສະໜອງຄວາມຕ້ອງການດ້ານຄວາມປອດໄພຂອງລູກໆຂອງເຂົາເຈົ້າ, ສຸຂະພາບ, ແລະ ຄວາມເປັນຢູ່ທີ່ດີ.

ເປົ້າໝາຍຂອງ FVS ແມ່ນສະໜັບສະໜູນຄອບຄົວໃຫ້ມີສ່ວນຮ່ວມໃນບໍລິການທີ່ຕອບສະໜອງຄວາມຕ້ອງການຂອງຄອບຄົວ ແລະ ໃນຂະນະດຽວກັນກໍ່ເສີມສ້າງ ແລະ ຮັກສາ ຄອບຄົວໃຫ້ເປັນໜຶ່ງດຽວ.

ພະນັກງານສັງຄົມສົງເຄາະເຮັດວຽກກັບຄອບຄົວເພື່ອເຮັດການປະເມີນຈຸດແຂງ, ຄວາມຕ້ອງການ, ແລະ ຄວາມປອດໄພຂອງເດັກນ້ອຍ. ຄອບຄົວສາມາດເລືອກທີ່ຈະຢຸດການເຮັດວຽກກັບ Department of Children, Youth, and Families (ພະແນກເດັກ, ຊາວໜຸ່ມ ແລະ ຄອບຄົວ, DCYF) ໄດ້ທຸກເວລາ. ຖ້າວ່າຄອບຄົວໃດໜຶ່ງທີ່ຈະຢຸດເຊົາບໍລິການ FVS, ພະນັກງານດູແລກໍລະນີ ແມ່ນມີຄວາມຈໍາເປັນຕ້ອງໄດ້ປະເມີນລະດັບຄວາມປອດໄພ ແລະ ຄວາມສ່ຽງກ່ອນທີ່ຈະປິດກໍລະນີ. ຖ້າວ່າມີຄວາມຕ້ອງການໃດທີ່ບໍ່ຕອບສະໜອງທີ່ກ່ຽວຂ້ອງກັບຄວາມປອດໄພຂອງເດັກນ້ອຍ, DCYF ອາດຈະຮ້ອງຂໍໃຫ້ສານເຂົ້າມາແຊກແຊງໂດຍການຍື່ນຄໍາຮ້ອງຂໍການເພິ່ງພາອາໄສ.

## FVS ເຮັດວຽກຄືແນວໃດ?

FVS ອາດຈະໄດ້ຮັບການສະເໜີຕາມກໍລະນີ CPS ເມື່ອບໍລິການ ແລະ ຊັບພະຍາກອນສາມາດສະໜັບສະໜູນຄອບຄົວໃນການຮັບປະກັນວ່າເດັກນ້ອຍມີຄວາມປອດໄພ ແລະ ຄວາມໝັ້ນຄົງຂອງຄອບຄົວ.

ຄອບຄົວສາມາດຂໍຮັບບໍລິການ FVS ໃນຍາມຈໍາເປັ
ນໄດ້ໂດຍການໂທຕິດຕໍ່ DCYF.





## ຄວາມຄາດຫວັງ

### ຈະຄາດຫວັງຫຍັງຈາກພະນັກງານກໍລະນີ FVS ຂອງທ່ານ

- ພວກເຂົາຈະປະຕິບັດຕໍ່ທ່ານ ແລະ ຄອບຄົວຂອງທ່ານດ້ວຍຄວາມເຄົາລົບ.
- ເພື່ອເຮັດວຽກກັບທຸກຄົນ ແລະ ສ້າງແຜນເພື່ອໃຫ້ລູກໆຂອງທ່ານປອດໄພ ແລະ ໃຫ້ແນ່ໃຈວ່າຄວາມຕ້ອງການພື້ນຖານຂອງລູກໆຂອງທ່ານໄດ້ຮັບການຕອບສະໜອງ.
- ພວກເຂົາຈະສະເໜີບໍລິການທີ່ສະເພາະເຈາະຈົ່ງໃຫ້ກັບຄອບຄົວຂອງທ່ານ, ຕົວຢ່າງການໃຫ້ຄວາມຮູ້ການລ້ຽງດູໃນການເປັນພໍ່ແມ່, ການໃຫ້ຄໍາປຶກສາ; ຫຼື ການບໍາບັດ. ເຂົ້າໄປທີ່ເວັບໄຊ້ຂອງ DCYF ເພື່ອເບິ່ງລາຍການບໍລິການ ແລະ ຊັບພະຍາກອນທີ່ຄວບຄຸມຫຼາຍຂຶ້ນ.
- ພວກເຂົາຈະພົບກັບຄອບຄົວຂອງທ່ານ ແລະ ພົບກັບລູກໆຂອງທ່ານຢູ່ເຮືອນຂອງທ່ານເປັນການສ່ວນຕົວຢ່າງໜ້ອຍໜຶ່ງເຖິງສອງຄັ້ງຕໍ່ເດືອນ.
- ພວກເຂົາຈະຕິດຕໍ່ຜູ້ສະໜອງການບໍລິການ, ຄູ່ຮ່ວມງານຂອງຊຸມຊົນ, ແລະ ໝູ່ເພື່ອນ (ດ້ວຍການອະນຸຍາດຈາກທ່ານ) ເພື່ອໃຫ້ມີທັດສະນະພາຍນອກກ່ຽວກັບຄວາມຄືບໜ້າຂອງທ່ານ ແລະ ຄອບຄົວຂອງທ່ານ.
- ພວກເຂົຈະລົມກັບທ່ານກ່ຽວກັບຄວາມເປັນສ່ວນຕົວ ແລະ ຽວກັບຄວາມປອດໄພຂອງເດັກນ້ອຍ/ເດັກນ້ອຍຮຽນຍ່າງ.
- ຖ້າວ່າລູກຂອງທ່ານຖືກສົງໃສວ່າຖືກຂູດຮີດສະແຫວງຫາຜົນປະໂຫຍດທາງເພດໃນທາງການຄ້າ, ພວກເຂົາຈະຊ່ວຍທ່ານເຮັດການປະເມີນ ແລະ ສະເໜີການບໍລິການ.
- ພວກເຂົາຈະຊຸກຍູ້ສົ່ງເສີມໃຫ້ທ່ານເຮັດວຽກຮ່ວມກັບພັນທະມິດ ຫຼື ເຂົ້າຮ່ວມກຸ່ມສະໜັບສະໜູນໃດກໍຕາມເມື່ອມີໂອກາດ.

### ສິ່ງທີ່ພະນັກງານ FVS ກໍລະນີຄາດຫວັງຈາກທ່ານແມ່ນຫຍັງ

- ເພື່ອມີສ່ວນຮ່ວມໃນຂະບວນການປະເມີນຜົນ ແລະ ຊ່ວຍພັດທະນາແຜນເພື່ອເສີມສ້າງຄວາມເປັນຢູ່ທີ່ດີ ແລະ ຄວາມໝັ້ນຄົງໃນໄລຍະຍາວຂອງຄອບຄົວຂອງທ່ານ.
- ເພື່ອປະຕິບັດຕາມແຜນຄວາມປອດໄພ (ຖ້າວ່າທ່ານມີ).
- ເພື່ອມີສ່ວນຮ່ວມໃນການບໍລິການ ເສີມສ້າງຄວາມເປັນຢູ່ທີ່ດີ ແລະ ຄວາມໝັ້ນຄົງໃນໄລຍະຍາວຂອງຄອບຄົວຂອງທ່ານ.
- ເພື່ອອະນຸຍາດໃຫ້ FVS ພະນັກງານດູແລກໍລະນ FVS ໄດ້ພົບກັບລູກໆຂອງທ່ານເປັນການສ່ວນຕົວ.
- ເພື່ອພົບກັບພະນັກງານດູແລກໍລະນີ FVS ເປັນປະຈໍາ.
- ເພື່ອແຈ້ງໃຫ້ພະນັກງານດູແລກໍລະນີ FVS ຮັບຊາບເຖິງການປ່ຽນແປງໃດໆກໍຕາມ ໃນສະຖານະການຂອງທ່ານ.
- ເພື່ອລົງລາຍເຊັນເຜີຍແຜ່ຂໍ້ມູນສໍາລັບທ່ານ ແລະ ລູກໆຂອງທ່ານ.
- ເພື່ອແບ່ງປັນຈຸດແຂງ, ຄວາມຕ້ອງການ ແລະ ສະຖານະການຂອງຄອບຄົວຂອງທ່ານ.